


**ທີ່ຕັ້ງ:** ທະນາຄານແຫ່ງ ສປປ ລາວ ພາກກາງ ທີ່ແຂວງສະຫວັນນະເຂດ ແມ່ນໜຶ່ງໃນກົງຈັກການຈັດຕັ້ງຂອງທະນາຄານແຫ່ງ ສປປ ລາວ ມີຖານະທຽບເທົ່າກົມ, ຊຶ່ງດ້ານວິຊາການ ແລະ ການຈັດຕັ້ງແມ່ນຂຶ້ນກັບທະນາ ຄານແຫ່ງ ສປປ ລາວ ສຳນັກງານໃຫຍ່. ສຳລັບດ້ານການເມືອງແນວຄິດ, ອົງການຈັດຕັ້ງພັກ ແລະ ອົງການຈັດຕັ້ງມະຫາຊົນ ແມ່ນຂຶ້ນກັບອຳນາດການປົກຄອງຂັ້ນທ້ອງຖິ່ນທີ່ຕັ້ງຢູ່.

**ພາລະບົດບາດ:** ເປັນເສນາທິການໃຫ້ແກ່ຄະນະຜູ້ວ່າການທະນາຄານ, ຄະນະພັກ ແລະ ອຳນາດການປົກຄອງທ້ອງຖິ່ນທີ່ຕົນຮັບຜິດຊອບ ໃນການຄຸ້ມຄອງມະຫາພາກທາງດ້ານເງິນຕາ ແລະ ສິນເຊື່ອ, ຈັດຕັ້ງປະຕິບັດໜ້າທີ່ສົ່ງເສີມ ແລະ ປົກປັກຮັກສາສະຖຽນລະພາບຂອງເງິນກີບ, ຍົກສູງກົນໄກປະສິດທິພາບໃນການຊຳລະໜີ້ ຂອງບັນດາທະນາຄານທຸລະກິດ ແລະ ສະຖາບັນການເງິນ, ອຳນວຍຄວບຄຸມການເຄື່ອນໄຫວ ເງິນຕາຕາມນະໂຍບາຍທີ່ ທະນາຄານແຫ່ງ ສປປ ລາວ ວາງອອກ ເພື່ອຮັບໃຊ້ແຜນພັດທະນາເສດຖະກິດ~ສັງຄົມຂອງທ້ອງຖິ່ນ ທີ່ຕົນຮັບຜິດຊອບໃນຂົງເຂດ 3 ແຂວງ ພາກກາງ ໃຫ້ຂະຫຍາຍຕົວ.

**ໜ້າທີ່:** ຄົ້ນຄ້ວາ, ເຊື່ອມຊຶມ ແລະ ກຳແໜ້ນນະໂຍບາຍຂອງພັກ, ລະບຽບກົດໝາຍຂອງລັດ, ມະຕິຄຳສັ່ງ ແລະ ລະບຽບການຂອງຄະນະພັກ, ຄະນະຜູ້ວ່າການ ວາງອອກແຕ່ລະໄລຍະ ເພື່ອຫັນເປັນແຜນການ, ໂຄງການ ແລະ ແຜນງານລະອຽດ, ຄຸ້ມຄອງ, ກວດກາ ແລະ ບໍລິການຊຳລະສະສາງໃຫ້ແກ່ບັນດາທະນາຄານທຸລະກິດ ແລະ ສາຖາບັນການເງິນໃນການປະຕິບັດເງິນຕາ~ສິນເຊື່ອ, ຄຸ້ມຄອງການດຳເນີນທຸລະກິດເງິນຕາຕ່າງປະເທດ ແລະ ວັດຖຸມີຄ່າ, ໂຄສະນາປູກລະດົມ ແລະ ສົ່ງເສີມການນຳໃຊ້ເງິນກີບ ແລະ ໜ້າທີ່ອື່ນໆ ຕາມຂໍ້ຕົກລົງເລກທີ 445/ທຫລ, ລົງວັນທີ 18/6/2010.

**ຂອບເຂດສິດ:** ພິຈາລະນາ ອອກໃບອະນຸຍາດການນຳເງິນຕາຕ່າງປະເທດ ແລະ ວັດຖຸມີຄ່າເຂົ້າ~ອອກ ຢັ້ງຢືນການນຳທຶນເຂົ້າມາລົງທຶນຂອງນັກລົງທຶນຕ່າງປະເທດ ແລະ ຄົ້ນຄ້ວາອອກໃບອະນຸຍາດສ້າງຕັ້ງຮ້ານແລກປ່ຽນເງິນຕາຕ່າງປະເທດພາກເອກະຊົນ ແລະ ທະນາຄານທຸລະກິດ, ພິຈາລະນາສ້າງຕັ້ງໂຮງຊວດຈຳ ແລະ ສະຫະກອນສິນເຊື່ອ ຕາມຂອບເຂດສິດຂອງຕົນ, ເກັບກຳຂໍ້ມູນຂ່າວສານກ່ຽວກັບສະພາບດ້ານການເງິນ~ເງິນຕາ, ສິນເຊື່ອ ແລະ ການຊຳລະສະສາງຢູ່ທ້ອງຖິ່ນທີ່ຮັບຜິດຊອບ ເພື່ອລາຍງານໃຫ້ທະນາຄານແຫ່ງ ສປປ ລາວ ສຳນັກງານໃຫຍ່ ແລະ ອຳນາດການປົກຄອງທ້ອງຖິ່ນຊາບ ແລະ ປະຕິບັດສິດອື່ນໆຕາມການມອບໝາຍຂອງຄະນະຜູ້ວ່າການ ທະນາຄານແຫ່ງ ສປປ ລາວ ຫຼື ອຳນາດການປົກຄອງທ້ອງຖິ່ນທີ່ພົວພັນເຖິງວຽກງານຂອງຕົນ.